LAOTIAN

**ມະຫາວິທະຍາໄລຂອງ ລອສ ແອນເຈີເລສ ຄາລິຟໍເນຍ**

# ໃບລາຍການບົ່ງບອກສິດ

## ຂອງຜູ້ເຂົ້າຮ່ວມການຄົ້ນຄ້ວາ

ສິດເຫລົ່ານີ້ ແມ່ນສິດຂອງທຸກໆຄົນ ຜູ້ທີ່ຖືກຂໍໃຫ້ເຂົ້າຮ່ວມໃນການສຶກສາຄົ້ນຄ້ວາທາງດ້ານການແພດ. ໃນຂະນະທີ່ເປັນຜູ້ເຂົ້າຮ່ວມການຄົ້ນຄ້ວາ, ຂ້າພະເຈົ້າມີສິດດັ່ງຕໍ່ໄປນີ້:

1. ຂ້າພະເຈົ້າມີສິດທີ່ຈະຮັບຮູ້ ສິ່ງທີ່ການຄົ້ນຄ້ວາກຳລັງພະຍາຍາມຄົ້ນຫາ.

2. ຂ້າພະເຈົ້າມີສິດທີ່ຈະຮັບຮູ້ກ່ຽວກັບຂັ້ນຕອນຂອງການຄົ້ນຄ້ວາທັງໝົດ, ຢາ, ແລະ/ຫລື ຄຳແນະນຳ ແລະ ສິ່ງຕ່າງໆ ເຫລົ່ານີ້ ທີ່ແຕກຕ່າງຈາກສິ່ງທີ່ຈະນຳໃຊ້ໃນການປະຕິບັດແບບມາດຕະຖານ ຫລື ບໍ່.

3. ຂ້າພະເຈົ້າມີສິດທີ່ຈະຮັບຮູ້ກ່ຽວກັບຄວາມສ່ຽງຕ່າງໆ, ຄວາມບໍ່ສະດວກ ຫລື ຜົນກະທົບຂ້າງຄຽງ ທີ່ອາດຈະເກີດຂຶ້ນຢ່າງມີເຫດຜົນ ເຊິ່ງເປັນຜົນທີ່ໄດ້ຮັບຈາກການຄົ້ນຄ້ວາ.

4. ຂ້າພະເຈົ້າມີສິດທີ່ຈະຮັບຮູ້ກ່ຽວກັບສິດຜົນປະໂຫຍດ, ຖ້າມີ, ຂ້າພະເຈົ້າສາມາດຄາດຫວັງຈາກການເຂົ້າຮ່ວມຢ່າງມີເຫດຜົນ.

5. ຂ້າພະເຈົ້າມີສິດທີ່ຈະຮັບຮູ້ກ່ຽວກັບທາງເລືອກອື່ນໆ ທີ່ຂ້າພະເຈົ້າມີ ແລະ ພວກມັນອາດຈະດີກ່ວາ ຫລື ຮ້າຍແຮງກວ່າຢູ່ໃນການຄົ້ນຄ້ວາ. ທາງເລືອກເຫລົ່ານີ້ ອາດຈະປະກອບດ້ວຍຂັ້ນຕອນການດຳເນີນງານ, ຢາ ຫລື ຄຳແນະນຳອື່ນໆ.

6. ຂ້າພະເຈົ້າມີສິດທີ່ຈະຮັບຮູ້ ປະເພດຂອງການປິ່ນປົວທີ່ຈະໄດ້ຮັບ ຖ້າວ່າການຄົ້ນຄ້ວາເຮັດໃຫ້ເກີດພະຍາດແຊກແຊງຕ່າງໆ.

7. ຂ້າພະເຈົ້າມີສິດທີ່ຈະສອບຖາມຄຳຖາມຕ່າງໆ ທີ່ກ່ຽວຂ້ອງກັບການຄົ້ນຄ້ວາ ຫລື ຂັ້ນຕອນຂອງການຄົ້ນຄ້ວາ. ຂ້າພະເຈົ້າສາມາດສອບຖາມຄຳຖາມເຫລົ່ານີ້ກ່ອນການຄົ້ນຄ້ວາຈະເລີ້ມຕົ້ນຂຶ້ນ ຫລື ຕະຫລອດເວລາໃນຊ່ວງເວລາຂອງການຄົ້ນຄ້ວາ.

8. ຂ້າພະເຈົ້າມີສິດທີ່ຈະປະຕິເສດການເຂົ້າຮ່ວມເປັນພາກສ່ວນໜຶ່ງຂອງການຄົ້ນຄ້ວາ ຫລື ຢຸດ ໄດ້ຕະຫລອດເວລາ. ການຕັດສິນໃຈນີ້ຈະບໍ່ມີຜົນກະທົບຕໍ່ການປິ່ນປົວຂອງຂ້າພະເຈົ້າ ຫລື ສາຍພົວພັນກັບໝໍ ຫລື ສະຖາບັນນີ້ ໃນວິທີທາງອື່ນ.

9. ຂ້າພະເຈົ້າມີສິດໄດ້ຮັບສຳເນົາ ທີ່ໄດ້ລົງນາມ ແລະ ລົງວັນທີ ໃສ່ແບບຟອມຍິນຍອມເພື່ອການຄົ້ນຄ້ວາ.

10. ຂ້າພະເຈົ້າມີສິດທີ່ຈະໄດ້ຮັບອິດສະລະພາບຈາກຄວາມກົດດັນຕ່າງໆ ໃນຂະນະທີ່ຂ້າພະເຈົ້າຕັດສິນໃຈວ່າ ຂ້າພະເຈົ້າຕ້ອງການເຂົ້າຮ່ວມໃນການສຶກສາຄົ້ນຄ້ວາ ຫລື ບໍ່.

---------------------------------------------------

ຖ້າວ່າຂ້າພະເຈົ້າມີຄຳຖາມ ຫລື ຄວາມກັງວົນ ຂ້າພະເຈົ້າສາມາດສອບຖາມກັບນັກຄົ້ນຄ້ວາ ຫລື ຜູ້ຊ່ວຍໃນການຄົ້ນຄ້ວາ. ຂ້າພະເຈົ້າສາມາດຕິດຕໍ່ພົວພັນກັບ ຫ້ອງການສຳລັບປ້ອງກັນຫົວຂໍ້ຂອງການຄົ້ນຄ້ວາ (OPRS) ເຊັ່ນດຽວກັນ, ເຊິ່ງຊ່ວຍປ້ອງກັນຜູ້ເຂົ້າຮ່ວມຂອງການສຶກສາຄົ້ນຄ້ວາ. ຂ້າພະເຈົ້າສາມາດຕິດຕໍ່ຫາຫ້ອງການສຳລັບປ້ອງກັນຫົວຂໍ້ຂອງການຄົ້ນຄ້ວາ (OPRS) ໂດຍໂທຣະສັບໄປທີ່ໝາຍເລກ 310-825-8714 ຈາກ 8:00 ໂມງເຊົ້າ ເຖິງ 5:00 ໂມງແລງ, ວັນຈັນ ຮອດ ວັນສຸກ. ຖ້າວ່າຂ້າພະເຈົ້າໂທຫາຫ້ອງການນີ້ ແລະ ບໍ່ສາມາດເວົ້າພາສາອັງກິດ ຫລື ພາສາສະເປນໄດ້, ຂ້າພະເຈົ້າຄວນຈະມີຜູ້ໃດຜູ້ໜຶ່ງທີ່ສາມາດແປຄວາມໝາຍໃຫ້ຂ້າພະເຈົ້າ. ເຊັ່ນດຽວກັນນັ້ນ ຂ້າພະເຈົ້າອາດຈະຂຽນຈົດໝາຍໄປທີ່ ຫ້ອງການສຳລັບປ້ອງກັນຫົວຂໍ້ຂອງການຄົ້ນຄ້ວາ (OPRS), 1000 Kinross Avenue, Suite 102, Box 951694, Los Angeles, CA 90095-1694.